swisscontact




# ຂໍເຊີນ ພາກສ່ວນ ບັນດາສະມາຄົມ ແລະ ອົງການຈັດຕັ້ງ ທີ່ມີຄວາມສົນໃຈ ເຂົ້າຮ່ວມເປັນຄູ່ຮ່ວມງານ ຂອງ ໂຄງການ

## ໃນການຈັດຕັ້ງປະຕິບັດ ວົງຈອນການໃຫ້ຄໍາປຶກສາດ້ານການມີວຽກເຮັດງານທໍາ ພາຍໃຕ້ ໂຄງການຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທໍາ (VTESS)

ໂຄງການຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທໍາ (VTESS) ໄລຍະທີ 2 ແມ່ນຈະເລີ່ມແຕ່ ປີ 2024 – 2027, ມີ ເປົ້າໝາຍເລັງໃສ່ເພື່ອສະໜອງການຝຶກອົບຮົມວິຊາຊີບ ທີ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ໂດຍສຸມໃສ່ກຸ່ມເປົ້າໝາຍທີ່ເປັນໄວໜຸ່ມຜູ້ດ້ອຍໂອກາດທີ່ ຮຽນຈົບຊັ້ນປະຖົມ ຫຼື ຈົບຊັ້ນມັດທະຍົມຕອນຕົ້ນ, ທີ່ມີອາຍຸລະຫວ່າງ 15-35 ປີ. ເປົ້າໝາຍແມ່ນເພື່ອໃຫ້ເຂົາເຈົ້າມີວຽກເຮັດງານທໍາ, ປະກອບອາຊີບດ້ວຍຕົນເອງ ຫຼື ກັບຄືນເຂົ້າສູ່ລະບົບການສຶກສາ ໂດຍຜ່ານວົງຈອນການໃຫ້ຄໍາປຶກສາດ້ານການມີວຽກເຮັດງານທໍາ. ເຊິ່ງກຸ່ມເປົ້າໝາຍດັ່ງກ່າວ ຈະໄດ້ເຂົ້າຮ່ວມວົງຈອນການໃຫ້ຄໍາປຶກສາ ເປັນໄລຍະເວລາ ທັງໝົດ 9 ເດືອນ.

swisscontact

ໂຄງການ VTESS, ອົງການສະວິດຄອນແທັກ ກຳລັງຊອກຫາ **ຄູ່ຮ່ວມງານທີ່ມີຄວາມສົນໃຈ ເຂົ້າຮ່ວມການດຳເນີນກິດຈະກຳ ໂດຍການມອບໝາຍ/ແຕ່ງຕັ້ງພະນັກງານທີ່ມີເງື່ອນໄຂເໝາະສົມ ເຂົ້າຮ່ວມຝຶກອົບຮົມ "ການເປັນຜູ້ໃຫ້ຄຳປຶກສາດ້ານການມີວຽກເຮັດງານທຳ".** ໂດຍຄູ່ຮ່ວມງານທີ່ສົນໃຈ ແມ່ນຕ້ອງຢູ່ໃນແຂວງເປົ້າໝາຍຂອງໂຄງການຄື: ນະຄອນຫຼວງວຽງຈັນ, ແຂວງອຸດົມໄຊ, ແຂວງໄຊຍະບູລີ, ແຂວງຊຽງຂວາງ, ແຂວງຄຳມ່ວນ ແລະ ແຂວງສາລະວັນ.

ການມີ ອົງການຈັດຕັ້ງຄູ່ຮ່ວມງານ ແລະ ຜູ້ໃຫ້ຄຳປຶກສາ ທີ່ມີຄຸນສົມບັດທີ່ເໝາະສົມ ແມ່ນເປັນປັດໄຈທີ່ສຳຄັນຕໍ່ຜົນສຳເລັດ ຂອງການຈັດຕັ້ງປະຕິບັດ ວົງຈອນການໃຫ້ຄຳປຶກສາດ້ານການມີວຽກເຮັດງານທຳ. ໃນປີ 2024 ທາງໂຄງການມີແຜນຝຶກອົບຮົມຜູ້ໃຫ້ຄຳປຶກສາໃໝ່ ຈຳນວນ 15 ທ່ານ, ພາຍໃນ 6 ແຂວງເປົ້າໝາຍ ຂອງ ໂຄງການ, ໃນນັ້ນ ຜູ້ໃຫ້ຄຳປຶກສາແຕ່ລະທ່ານ ຈະໄດ້ຮັບຜິດຊອບໃນການໃຫ້ຄຳປຶກສາ ໃຫ້ແກ່ໄວໜຸ່ມກຸ່ມເປົ້າໝາຍ 10 ຄົນ/ກຸ່ມ. ທາງໂຄງການໃຫ້ຄວາມສຳຄັນຕໍ່ກັບຄວາມສົມດຸນ (ສັດສ່ວນ ເພດຍິງ-ຊາຍ, ຊົນເຜົ່າ) ໃນກຸ່ມ ຂອງ ຜູ້ໃຫ້ຄຳປຶກສາ ເພື່ອດຳເນີນການໃຫ້ຄຳປຶກສາ ກົງກັບຄວາມແຕກຕ່າງກັນພາຍໃນກຸ່ມ ຂອງໄວໜຸ່ມກຸ່ມເປົ້າໝາຍ ຕົວຢ່າງ: ກຸ່ມຊົນເຜົ່າ (ດ້ານພາສາ) ແລະ ເພດ (ຈຳນວນ ຊາຍ/ຍິງ). ການຝຶກອົບຮົມ ການເປັນຜູ້ໃຫ້ຄຳປຶກສາດ້ານການມີວຽກເຮັດງານທຳ ແມ່ນໄດ້ແບ່ງອອກເປັນ 8 ຄັ້ງ, ສະເລ່ຍແຕ່ລະຄັ້ງ ປະມານ 5 ວັນ. ພາຍຫຼັງສຳເລັດການຝຶກອົບຮົມແຕ່ລະຄັ້ງ ຜູ້ໃຫ້ຄຳປຶກສາ ຈະໄດ້ນຳເອົາຄວາມຮູ້ດັ່ງກ່າວ ນຳໃຊ້ເຂົ້າໃນການດຳເນີນ ການໃຫ້ຄຳປຶກສາ ແກ່ໄວໜຸ່ມກຸ່ມເປົ້າໝາຍ.

ອົງການຈັດຕັ້ງຄູ່ຮ່ວມງານທີ່ມີຄວາມສົນໃຈ ເຂົ້າຮ່ວມການດຳເນີນກິດຈະກຳ ໂດຍການມອບໝາຍ/ແຕ່ງຕັ້ງພະນັກງານທີ່ມີເງື່ອນໄຂເໝາະສົມ ໃຫ້ເປັນ ຜູ້ໃຫ້ຄຳປຶກສາ ຂອງ ໂຄງການ. ອົງການຈັດຕັ້ງຄູ່ຮ່ວມງານຈະໄດ້ຮັບຜິດຊອບ ກ່ຽວກັບ ການບໍລິຫານຈັດການກ່ຽວກັບດຳເນີນກິດຈະກຳ, ຊີ້ນຳຜູ້ໃຫ້ຄຳປຶກສາ ແລະ ລາຍງານຕໍ່ໂຄງການ, ເຊິ່ງບົດລາຍງານແມ່ນຖືກກະກຽມໂດຍຜູ້ໃຫ້ຄຳປຶກສາ.

# ຂໍເຊີນ ພາກສ່ວນ ບັນດາສະມາຄົມ ແລະອົງການຈັດຕັ້ງ ທີ່ມີຄວາມສົນໃຈ ເຂົ້າຮ່ວມເປັນຄູ່ຮ່ວມງານ ຂອງ ໂຄງການ

## ໃນການຈັດຕັ້ງປະຕິບັດ ວົງຈອນການໃຫ້ຄຳປຶກສາດ້ານການມີວຽກເຮັດງານທຳ ພາຍໃຕ້ ໂຄງການຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທຳ (VTESS)

**ໄລຍະເວລາຂອງສັນຍາ:** 14 ເດືອນ (ເລີ່ມແຕ່ເດືອນ ກຸມພາ 2024 ຫາ ເດືອນ ມີນາ 2025)

ພື້ນທີ່**ເປົ້າໝາຍຂອງໂຄງການ:** ນະຄອນຫຼວງວຽງຈັນ, ແຂວງອຸດົມໄຊ, ແຂວງໄຊຍະບູລີ, ແຂວງຊຽງຂວາງ, ແຂວງຄຳມ່ວນ ແລະ ແຂວງສາລະວັນ. ອົງການຈັດຕັ້ງ ທີ່ມີຄວາມສົນໃຈສະໝັກຈະຕ້ອງຢູ່ໃນແຂວງເປົ້າໝາຍດັ່ງກ່າວ ທີ່ກ່າວມາ.

**ປິດຮັບສະໝັກ: 24 ພະຈິກ 2023**

### ຂັ້ນຕອນການສະໝັກ

ພາກສ່ວນ ທີ່ມີເງື່ອນໄຂໃນການສະໝັກເຂົ້າຮ່ວມເປັນຄູ່ຮ່ວມງານ ໃນການຈັດຕັ້ງປະຕິບັດກິດຈະກຳ ຮ່ວມກັບໂຄງການ ລວມມີ ອົງການຈັດຕັ້ງພາກລັດ, ເອກະຊົນ, **ບັນດາ ສະມາຄົມ (NPAs) ແລະ ອົງການຈັດຕັ້ງສາກົນ (INGOs)**

swisscontact

## ເງື່ອນໄຂ ສົນໃຈເປັນອົງການຈັດຕັ້ງຄູ່ຮ່ວມງານ ແລະ ເປັນ ຜູ້ໃຫ້ຄຳປຶກສາ:

### ເງື່ອນໄຂ ສຳລັບອົງການຈັດຕັ້ງ ທີ່ຈະສະໝັກ ເປັນຄູ່ຮ່ວມງານ:

1. ມີຄວາມຮູ້ ແລະ ປະສົບການ ເຮັດວຽກກັບໄວໜຸ່ມກຸ່ມຜູ້ດ້ອຍໂອກາດ
2. ມີຄວາມຮູ້ ແລະ ປະສົບການ ໃນການດຳເນີນກິດຈະກຳໂຄງການ/ກ່ຽວກັບການຝຶກອົບຮົມວິຊາຊີບ, ການແນະນຳດ້ານອາຊີບ ແລະ ການສະໜັບສະໜູນການຊອກວຽກ,
3. ມີສະຖານທີ່ ທີ່ເໝາະສົມ (ເຊັ່ນ: ຫ້ອງປະຊຸມ ຫຼື ຫ້ອງໃຫ້ຈັດກິດຈະກຳ) ນຳໃຊ້ເຂົ້າໃນການຈັດກິດຈະກຳ ຂອງວົງຈອນການໃຫ້ຄຳປຶກສາ  ໄດ້ ຈຳນວນ 20 ຄົນ.
4. ມີພະນັກງານ ຜູ້ທີ່ມີເງື່ອນໄຂເໝາະສົມ ເພື່ອມອບໝາຍ ໃຫ້ເຂົ້າຮ່ວມການຝຶກອົບຮົມ ການເປັນຜູ້ໃຫ້ຄຳປຶກສາ  ແລະ ດຳເນີນ ວົງຈອນການໃຫ້ຄຳປຶກສາ ຮ່ວມກັບ ໄວໜຸ່ມກຸ່ມເປົ້າໝາຍ. ອົງການຈັດຕັ້ງຄູ່ຮ່ວມງານຕ້ອງສາມາດຈັດສັນເວລາໃຫ້ແກ່ ພະນັກງານຜູ້ຖືກມອບໝາຍ ໃນການເຮັດວຽກ ເປັນຜູ້ໃຫ້ຄຳປຶກສາ 50% ຂອງວຽກປະຈຳພາຍໃນອົງການ (2.5 ວັນ/ອາທິດ)

### ເງື່ອນໄຂ ຜູ້ຈະສະໝັກ ເປັນຜູ້ໃຫ້ຄຳປຶກສາ:

1. ມີອາຍຸ ລະຫວ່າງ 25 ຫາ 45 ປີ.
2. ມີຄວາມຮູ້ ແລະ ປະສົບການຫຼາຍປີໃນການເຮັດວຽກກັບໄວໜຸ່ມ ແລະ ກຸ່ມຜູ້ດ້ອຍໂອກາດ (ເຊັ່ນ: ວຽກການສິດສອນ, ວຽກພັດທະນາໄວໜຸ່ມ,ວຽກພັດທະນາຊຸມຊົນ, ວຽກສັງຄົມສົງເຄາະ) ຫຼື ວຽກອາສາສະໝັກອື່ນໆ ທີ່ກ່ຽວຂ້ອງ.
3. ມີປະສົບການເຮັດວຽກ ຫຼື ການປະສານງານ ກັບພາກທຸລະກິດ
4. ເປັນພະນັກງານວິຊາການ
5. ສາມາດຈັດສັນເວລາ ໃນການດຳເນີນກິດຈະກຳ ວົງຈອນການໃຫ້ຄຳປຶກສາ ໃຫ້ແກ່ກຸ່ມເປົ້າໝາຍ ໄດ້ (2.5 ວັນ/ອາທິດ ເທົ່າກັບ 50% ຂອງເວລາການເຮັດວຽກປະຈຳໃນອົງການ);
6. ສາມາດເຂົ້າຮ່ວມຝຶກອົບຮົມ ການເປັນຜູ້ໃຫ້ຄຳປຶກສາ (ຈຳນວນ 8 ຄັ້ງ x 5 ວັນ ລວມທັງໝົດ = 40 ວັນ).
7. ເວົ້າ ແລະ ຂຽນພາສາລາວໄດ້ຢ່າງຄ່ອງແຄ້ວ, ສາມາດເວົ້າພາສາຊົນເຜົ່າໃດໜຶ່ງໃນທ້ອງຖິ່ນໄດ້ຍິ່ງເປັນການດີ.

## ການສົ່ງແບບຟອມສະໝັກ

ແບບຟອມສະໝັກປະກອບດ້ວຍ 2 ແບບຟອມຄື: **ແບບຟອມທີ 1** ແມ່ນ ສຳລັບ **ອົງການຈັດຕັ້ງທີ່ສົນໃຈສະໝັກເປັນຄູ່ຮ່ວມງານ (ເອກະສານຊ້ອນທ້າຍ 1)** ແລະ **ແບບຟອມທີ 2** ແມ່ນສຳລັບ **ຜູ້ສົນໃຈສະໝັກ ເປັນຜູ້ໃຫ້ຄຳປຶກສາ (ເອກະສານຊ້ອນທ້າຍ 2).**

1. ອົງການຈັດຕັ້ງ ຕ້ອງໄດ້ຕື່ມລາຍລະອຽດໃສ່ແບບຟອມ **ສຳລັບສະໝັກເປັນຄູ່ຮ່ວມງານ**, ໃຫ້ເບິ່ງລາຍລະອຽດໃນ (**ເອກະສານຊ້ອນທ້າຍ 1**).
2. **ຜູ້ສະໝັກ ເປັນຜູ້ໃຫ້ຄຳປຶກສາ ຕ້ອງໄດ້ຕື່ມລາຍລະອຽດໃສ່ແບບຟອມ ສຳລັບສະໝັກເປັນຜູ້ໃຫ້ຄຳປຶກສາ , ໃຫ້ເບິ່ງລາຍລະອຽດໃນ (*ເອກະສານຊ້ອນທ້າຍ 2*).** ອົງການຈັດຕັ້ງດັ່ງກ່າວ ແມ່ນຈະແຈກຢາຍແບບຟອມໃຫ້ກັບພະນັກງານຜູ້ທີ່ມີເງື່ອນໄຂ ແລະ ສົນໃຈສະໝັກ ທີ່ສັງກັດຢູ່ອົງການຈັດຕັ້ງຂອງຕົນ - ອົງການຈັດຕັ້ງທີ່ຈະເປັນ ຄູ່ຮ່ວມງານກັບໂຄງການ ຕ້ອງມອບໝາຍພະນັກງານຂອງຕົນ ຫຼື ບຸກຄົນທີ່ຈະມາເປັນຜູ້ໃຫ້ຄຳປຶກສາ ຕ້ອງສາມາດຈັດສັນເວລາ ເພື່ອເຮັດວຽກກັບໂຄງການຢ່າງຕ່ຳ 50% ຂອງເວລາທັງໝົດ ໃນການເຮັດວຽກ.

3. ພະນັກງານ ທີ່ມີຄວາມສົນໃຈສະໝັກເປັນ ຜູ້ໃຫ້ຄຳປຶກສາ ຈະຕ້ອງປະກອບແບບຟອມຂອງໃຜລາວ ແລະ ແບບຟອມດຽວ ເທົ່ານັ້ນ (ໃນກໍລະນີ ໃນອົງການຈັດຕັ້ງໜຶ່ງ ຫາກມີຫຼາຍກວ່າຫຼາຍຄົນສະໝັກ).

## ໄລຍະເວລາ ການຮັບສະໝັກ ແລະ ສັງລວມ:

| # | ໜ້າວຽກ | ຂອບເຂດ ກຳນົດສົ່ງບໍ່ໃຫ້ເກີນ ວັນທີ |
|---|---|---|
| 1. | ປະກາດຫາ ພາກສ່ວນອົງການຈັດຕັ້ງ ທີ່ມີຄວາມສົນໃຈເຂົ້າຮ່ວມເປັນຄູ່ຮ່ວມງານ ຂອງໂຄງການ | ວັນທີ 6 ພະຈິກ, 2023 |
| 2. | ຫາກ ຜູ້ສະໝັກ ສົນໃຈສອບຖາມລາຍລະອຽດເພີ່ມຕື່ມ ມາຍັງໂຄງການ VTESS ຜ່ານທາງອີເມວ recruitment.laos@swisscontact.org ຈົນເຖິງວັນທີ ທີ່ໄດ້ລະບຸໄວ້ ( ອີເມລ ຈະໄດ້ຮັບການຕອບກັບ, ຫາກບໍ່ໄດ້ຮັບການຕອບກັບ ກະລຸນາລົບກອນສົ່ງອີເມວອີກຄັ້ງ ແລະ ຕິດຕໍ່ໂທລະສັບ ມາທີ່ເບີ +856 21 454 148, ຫຼັງຈາກນັ້ນ ຄຳຖາມຈະຖືກຕອບກັບທາງອີເມວ) | ວັນທີ 10 ພະຈິກ, 2023 |
| 3. | ໂຄງການ VTESS ຈະໃຫ້ຄຳຊີ້ແຈງ ແລະ ຄຳຕອບ ຕໍ່ກັບລາຍລະອຽດທີ່ສອບຖາມເຂົ້າມາ ໃຫ້ແກ່ຜູ້ສະໝັກທຸກຄົນ ທາງອີເມລ ບໍ່ກາຍໃນວັນທີ ທີ່ໄດ້ລະບຸໄວ້ | ວັນທີ 17 ພະຈິກ, 2023 |
| 4. | ຜູ້ສະໝັກ ຕ້ອງໄດ້ ສົ່ງ ແບບຟອມສະໝັກ (ເອກະສານຊ້ອນທ້າຍ 1 ແລະ ເອກະສານຊ້ອນທ້າຍ 2) ມາຍັງໂຄງການ VTESS ຜ່ານທາງອີເມລ recruitment.laos@swisscontact.org ( ແລະ ອີເມລ ຈະໄດ້ຮັບການຕອບກັບ) | ວັນທີ 24 ພະຈິກ, 2023 |
| 5. | ໂຄງການ VTESS ຈະໄດ້ສັງລວມ, ຄັດເລືອກຜູ້ຖືກເງື່ອນໄຂ ແລະ ແຈ້ງໃຫ້ ຜູ້ສະໝັກ ຮັບຊາບ | ວັນທີ 30 ພະຈິກ, 2023 |

## ການຝຶກອົບຮົມ ການເປັນຜູ້ໃຫ້ຄຳປຶກສາ ແລະ ຈັດຕັ້ງປະຕິບັດວົງຈອນການໃຫ້ຄຳປຶກສາ ໃຫ້ແກ່ໄວໜຸ່ມກຸ່ມເປົ້າໝາຍ

- ການຝຶກອົບຮົມ ການເປັນຜູ້ໃຫ້ຄຳປຶກສາ ຄັ້ງທີ 1 ແມ່ນຈະເລີ່ມຂຶ້ນໃນເດືອນ ກຸມພາ 2024
- ຜູ້ໃຫ້ຄຳປຶກສາ ຈະໄດ້ເລີ່ມຈັດຕັ້ງປະຕິບັດວົງຈອນການໃຫ້ຄຳປຶກສາ ໃຫ້ແກ່ຜູ້ເຂົ້າຮ່ວມວົງຈອນ (ໄວໜຸ່ມກຸ່ມເປົ້າໝາຍ) ແຕ່ເດືອນ ມິຖຸນາ ປີ 2024 ແລະ ຈະສິ້ນສຸດ/ສຳເລັດ ວົງຈອນການໃຫ້ຄຳປຶກສາ ໃນເດືອນກຸມພາ ປີ 2025.